ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 66./ສພຂ.ຊຍ
ໄຊຍະບູລີ,ວັນທີ 12./8./ 2022.

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານໄລຍະແຕ່ ກອງປະຊຸມສະໄໝສາມັນ ເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳທົກເດືອນຕົ້ນປີ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ສະບັບເລກທີ 78/ຄປຈ.ຊຍ ລົງວັນທີ 31 ທັນວາ 2021.
- ອີງຕາມ ແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2022 ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 23/ຄປຈ.ຊຍ ລົງວັນທີ 25 ກຸມພາ 2022.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ກວ້າງຂວາງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກແຕ່ ກອງປະຊຸມສະໄໝສາມັນ ເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງ ວັນທີ 12 ສິງຫາ 2022.

### ກອງປະຊຸມ ຕົກລົງ:

**ມາດຕາ 1:** ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຫາກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມເຫັນດີ ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຫາກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ **ອັນພົ້ນເດັ່ນ** ສະພາປະຊາຊົນແຂວງ ໄດ້ປະຕິບັດພາລະບົດບາດ ດ້ານນິຕິກຳ ດ້ວຍການຈັດຕັ້ງການທາບທາມບັນດາຮ່າງກົດໝາຍ 2 ຄັ້ງ ມີ 9 ສະບັບ, ໃນນີ້ ສ້າງໃໝ່ 2 ສະບັບ, ປັບປຸງ 7 ສະບັບ; ເຂົ້າຮ່ວມທາບທາມຮ່າງກົດໝາຍທີ່ກະຊວງກ່ຽວຂ້ອງຈັດຂຶ້ນ 5 ຄັ້ງ ມີ 6 ສະບັບ; ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບທີ່ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ຄົ້ນຄວ້າສ້າງນິຕິກຳໃຕ້ກົດໝາຍ ເພື່ອຮັບໃຊ້ວຽກງານສະພາປະຊາຊົນແຂວງ 3 ສະບັບ; ຊຸກຍູ້ອົງການປົກຄອງແຂວງ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍໄດ້ 4 ສະບັບໃນນີ້ ສ້າງໃໝ່ 2 ສະບັບ; ປັບປຸງ 2 ສະບັບ; ພິຈາລະນາຮັບຮອງເອົາເນື້ອໃນຕ່າງໆ 16 ເນື້ອໃນ ແລະ ອອກເປັນມະຕິ 7 ສະບັບ; ຮັບຮອງເອົາບັນຫາສຳຄັນຂອງແຂວງໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ 39 ເນື້ອໃນ ແລະ ອອກເປັນມະຕິ 6 ສະບັບ; ຕິດຕາມກວດກາ ແລະ ຊຸກຍູ້ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີ II ໄດ້ 20 ພາກສ່ວນ; ຕິດຕາມໂຄງການລົງທຶນຂອງລັດທີ່ຈັດຕັ້ງຢູ່ແຂວງໄຊຍະບູລີ ໄດ້ 4 ໂຄງການ, ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ 15 ເລື່ອງ, ຖອນຄຳຮ້ອງ 05 ເລື່ອງ, ແຈ້ງຕອບ 02 ເລື່ອງ, ພວມສືບຕໍ່ແກ້ໄຂ 08 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດ

ໝາຍແກ່ປະຊາຊົນ 11 ຄັ້ງ; ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນຕໍ່ບຸກຄະລາກອນທີ່ຂຶ້ນລາຍງານ ແລະ ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ມີ 24 ທ່ານ, ຍິງ 3 ທ່ານ ໃນນີ້ ໄດ້ປະເພດດີເລີດ 2 ທ່ານ, ປະເພດດີ 21 ທ່ານ, ຍິງ 3 ທ່ານ; ຝຶກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ສະມາຊິກສະພາປະຊາຊົນແຂວງ-ພະນັກງານພາຍໃນສະພາປະຊາຊົນແຂວງ ໄດ້ 4 ຄັ້ງ, ເຂົ້າຮ່ວມຕາມການເຊີນຂອງສະພາແຫ່ງຊາດ ໄດ້ 4 ຄັ້ງ; ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໄດ້ທັງໝົດ 99 ຈຸດ, 122 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 12.408 ຄົນ, ຍິງ 6.217 ຄົນ, ໄດ້ຮັບຄຳສະເໜີຈາກຜູ້ມີສິດເລືອກຕັ້ງ 65 ຄຳສະເໜີ, ສາຍດ່ວນ 7 ຄຳສະເໜີ; ຍາດແຍ່ງງົບປະມານ ແລະ ວັດຖຸຊ່ວຍເຫຼືອປະຊາຊົນທົ່ວແຂວງ ມູນຄ່າ 569.700.000 ກີບ ແລະ ຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ-ລັດຖະບານ ຕາມພາລະບົດບາດຂອງຕົນ ເປັນຕົ້ນ ໄດ້ສ້າງແຜນເຄື່ອນໄຫວສະເຫຼີມສະຫຼອງປີສາມັກຄີ ມິດຕະພາບ ລາວ-ຫວຽດນາມ ໃນປີ 2022 ມີ 5 ກິດຈະກຳ ປະຕິບັດສຳເລັດ 3 ກິດຈະກຳ.

**ມາດຕາ 2: ຮັບຮອງເອົາແຜນການເຄື່ອນໄຫວ ຮອດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການ ຮອດກອງປະຊຸມສະໄໝສາມັນ ເທື່ອທີ 4 ດັ່ງນີ້:

1. ດ້ານນິຕິກຳ:

1.) ຄະນະປະຈຳສະພາປະຊາຊົນແຂວງ ເປັນເຈົ້າການສົມທົບ ກັບ ອົງການປົກຄອງແຂວງ ກໍ່ຄືພະແນກການອົງການ ເພື່ອຄົ້ນຄວ້າກະກຽມການທາບທາມ ຮ່າງກົດໝາຍຕາມແຜນທີ່ສະພາແຫ່ງຊາດກຳນົດໃນທ້າຍປີ 2022 ຈຳນວນ 19 ສະບັບໃນນີ້ ກົດໝາຍສ້າງໃໝ່ 6 ສະບັບ ແລະ ກົດໝາຍປັບປຸງໃໝ່ 13 ສະບັບ; ຊຸກຍູ້ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຂອງແຂວງ ໃຫ້ໄດ້ 2 ສະບັບຂຶ້ນໄປ ເພື່ອຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II;

2.) ເອົາໃຈໃສ່ສົມທົບກັບພະແນກການ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ໄດ້ຢ່າງກວ້າງຂວາງ, ສອດຄ່ອງກັບແຕ່ລະເປົ້າໝາຍ ຕາມເງື່ອນໄຂຕົວຈິງໃນແຕ່ລະໄລຍະ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານ ຂອງທ້ອງຖິ່ນ:

ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ດັ່ງນີ້:

**2.1 ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນຕົ້ນຕໍ ດັ່ງນີ້:**

1) ຮັບຟັງບົດລາຍງານໂດຍສັງເຂບ ຂອງທ່ານເຈົ້າແຂວງ ກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

2) ບົດລາຍງານ ຂອງພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023;

3) ບົດລາຍງານ ຂອງພະແນກການເງິນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

4) ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ;

5) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກເໜືອ; ບົດລາຍງານ ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021;

6) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາລັດແຂວງ; ບົດລາຍງານ ຜົນການກວດກາ ຕາມຜົນການກວດສອບປີ 2021;

7) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນແຂວງ;

8) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສານປະຊາຊົນແຂວງ;

9) ພິຈາລະນາຮັບຮອງນິຕິກຳໃຕ້ກົດໝາຍທີ່ສຳຄັນຂອງແຂວງ;

10) ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ;

11) ບົດປະກອບຄຳເຫັນ ຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ປະຈຳປີ 2022;

12) ຈັດຕັ້ງການປະເມີນຜົນດ້ວຍການໃຫ້ຄະແນນ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໃນກອງປະຊຸມສະພາປະຊາຊົນແຂວງ;

13) ຈັດຕັ້ງການໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບ ຂອງບຸກຄະລາກອນ ທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ.

**2.2 ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ.**

ຄະນະປະຈຳສະພາປະຊາຊົນແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດກົນໄກການດຳເນີນກອງປະຊຸມ ປະຈຳເດືອນ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມການສະເໜີຂອງອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການກວດກາລັດແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ.

**3. ດ້ານການຕິດຕາມກວດກາ.**

ໃນ 6 ເດືອນທ້າຍປີ 2022 ສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ການຕິດຕາມກວດກາວຽກງານຕົ້ນຕໍ ດັ່ງນີ້:

1) ດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ຄະນະປະຈຳແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ອົງການກວດກາລັດແຂວງ;

2) ຈັດຕັ້ງການດຳເນີນກອງປະຊຸມ ປະຈຳປີ 2022 ຂອງບັນດາຄະນະກຳມະການ ແລະ ຄະນະເລຂາທິການ; ກອງປະຊຸມຮ່ວມ ລະຫວ່າງ ຄະນະເລຂາທິການ ກັບ 3 ຄະນະກຳມະການ ແລະ ບັນດາພະແນການ, ອົງການ, ກົມກອງ;

3) ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II;

4) ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຕາມຄຳແນະນຳ ຂອງສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 18 ກໍລະກົດ 2022;

5) ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະ ການຈັດຕັ້ງປະຕິບັດກົດໝາຍ ທີ່ຕິດພັນກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳ ຂອງປະຊາຊົນ;

6) ຕິດຕາມກວດກາ ໂຄງການລົງທຶນຂອງລັດ ທີ່ສະພາປະຊາຊົນແຂວງອານຸມັດ ແລະ ໂຄງການຊ່ວຍເຫຼືອ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ສົ່ງຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດ ຂອງປະຊາຊົນ;

7) ຕິດຕາມກວດກາ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນແຂວງ ອົງການສືບສວນ-ສອບສວນ ແລະ ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;

8) ຕິດຕາມກວດກາ ການປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງແຕ່ງຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍຜ່ານການປະເມີນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II;

9) ຮັບ ແລະ ຄົ້ນຄວ້າ, ພິຈາລະນາ ຄໍາສະເໜີ, ຄໍາຮ້ອງຂໍຄວາມເປັນທໍາ ຂອງປະຊາຊົນ ທີ່ຍັງບໍ່ທັນສໍາເລັດ ຕາມມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາ ຄໍາຮ້ອງຂໍຄວາມເປັນທໍາ.

**4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ.**

1) ສືບຕໍ່ປະສານສົມທົບ ກັບ ອົງການປົກຄອງແຂວງ ເຊັນບົດບັນທຶກວ່າດ້ວຍການປະສານງານລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ໃຫ້ສໍາເລັດເພື່ອເປັນເຄື່ອງມືໃນການປະຕິບັດພາລະບົດບາດ,ສິດ ໜ້າທີ່ ຂອງສອງພາກສ່ວນ ໃຫ້ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ;

2) ປະສານສົມທົບ ກັບ ສະພາປະຊາຊົນແຂວງໃດໜຶ່ງ ເພື່ອຈັດຕັ້ງການພົບປະ, ແລກປ່ຽນບົດຮຽນ ກ່ຽວກັບວຽກງານສະພາປະຊາຊົນແຂວງ ໃຫ້ໄດ້ 1 ຄັ້ງ;

3) ສືບຕໍ່ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ ສະມາຊິກສະພາປະຊາຊົນແຂວງ ແລະ ບຸກຄະລາກອນ ຂອງອົງການປົກຄອງແຂວງ ໃຫ້ໄດ້ 1 ຄັ້ງ;

4) ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ຕິດພັນກັບການຍົກລະດັບຄວາມສາມາດ ດ້ານວິຊາສະເພາະ ໂດຍຜ່ານກອງປະຊຸມສໍາມະນາຝຶກອົບຮົມໃນຫົວຂໍ້ຕ່າງໆ;

5) ສືບຕໍ່ເພີ່ມທະວີການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈໍາພາກເໜືອ, ອົງການກວດກາລັດແຂວງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງຕາມກົດໝາຍ;

6) ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ພາຍໃນສະພາປະຊາຊົນແຂວງ, ໜ່ວຍງານຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ແລະ ບັນຈຸຊັບຊ້ອນບຸກຄະລາກອນ ເຂົ້າໃນຕໍາແໜ່ງງານໃຫ້ເໝາະສົມ.

**5. ດ້ານການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ.**

1) ນໍາພາ-ຊີ້ນໍາຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ເອົາໃຈໃສ່ປະສານສົມທົບກັບອົງການປົກຄອງເມືອງ ໃນການເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບການເກັບກໍາບັນຫາຕ່າງໆ ຂອງປະຊາຊົນ, ວິເຄາະ ວິໄຈ ຄໍາເຫັນຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງເມືອງ ຄົ້ນຄວ້າແກ້ໄຂຄໍາສະເໜີ, ສາຍຄ່ອນ ໃຫ້ຖືກຕ້ອງສອດຄ່ອງ ແລະ ທັນເວລາ;

2) ເອົາໃຈໃສ່ຊຸກຍູ້ການກະກຽມ ແລະ ດໍາເນີນກອງປະຊຸມ ປະຈໍາປີ 2022 ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ກ່ອນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II, ກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈໍາສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ;

3) ຄະນະປະຈໍາສະພາປະຊາຊົນແຂວງ ສືບຕໍ່ຄົ້ນຄວ້າປັບປຸງກົນໄກແບບແຜນວິທີເຮັດວຽກ ລະຫວ່າງ ກົງຈັກສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ; ເພີ່ມທະວີການປະສານສົມທົບ ກັບ ອົງການປົກຄອງເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ສະຫຼຸບຕີລາການເຄື່ອນໄຫວວຽກງານ ພ້ອມທັງ

ລາຍງານຄະນະປະຈຳສະພາປະຊາຊົນແຂວງ ເພື່ອສະເໜີຂໍ້ມູນໃຫ້ແກ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

6. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ.

1) ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ລັດຖະບານ, ຕາມນະໂຍບາຍໃນແຕ່ລະໄລຍະຢ່າງເປັນເຈົ້າການ; ເພີ່ມທະວີພົວພັນກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ໃນການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ເພື່ອຍາດແຍ່ງບົດຮຽນມາພັດທະນາວຽກງານສະພາປະຊາຊົນແຂວງ;

2) ສືບຕໍ່ປະສານສົມທົບກັບອົງການປົກຄອງແຂວງ ເພື່ອສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ໃຫ້ບັນລຸຕາມແຜນທີ່ກຳນົດໄວ້ ເປັນຕົ້ນແມ່ນ ກິດຈະກຳ ພົບປະແລກປ່ຽນບົດຮຽນ, ເຊັນບົດບັນທຶກຮ່ວມ ກັບ ແຂວງ ເຊີນລາ, ກວາງນິງ, ທາຍບິງ (ດ້ວຍຮູບແບບປົກກະຕິ ແລະ ຮູບແບບທາງໄກ) ແລະ ກິດຈະກຳອວຍພອນເຊິ່ງກັນ ແລະ ກັນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ